ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 08 ປປທ

ນະຄອນຫຼວງວຽງຈັນ, ວັນທີ 14-1.2008.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ຢາເສບຕິດ

~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 103/ສພຊ, ລົງວັນທີ 25 ທັນວາ 2007 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ຢາເສບຕິດ.

- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 10 ມັງກອນ 2008.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ຢາເສບຕິດ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 103 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ຢາເສບຕິດ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຢາເສບຕິດ ໃນວາລະປະຊຸມຕອນບ່າຍຂອງວັນທີ 25 ທັນວາ 2007

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ຢາເສບຕິດ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 25 ທັນວາ 2007

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 10 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 25 ທັນວາ 2007

# ກົດໝາຍ
# ວ່າດ້ວຍຢາເສບຕິດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍຢາເສບຕິດສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ແນໃສ່ເຮັດໃຫ້ສັງຄົມລາວປອດຈາກຢາເສບຕິດເກືອດຫ້າມ, ປະຊາຊົນລາວບັນດາເຜົ່າມີສຸຂະພາບເຂັ້ມແຂງ ສາມາດປະກອບສ່ວນເປັນກໍາລັງແຮງເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2. ຢາເສບຕິດ**

ຢາເສບຕິດ ແມ່ນ ສານກະຕຸ້ນ ຫຼື ລະງັບລະບົບປະສາດ ທີ່ໄດ້ມາຈາກພືດທີ່ໃຫ້ສານເສບຕິດ ຫຼື ຈາກການສັງເຄາະສານເຄມີ, ເມື່ອເສບແລ້ວ ຈະມີຜົນກະທົບ ຢ່າງຮຸນແຮງຕໍ່ຮ່າງກາຍ, ຈິດປະສາດ ແລະ ຈະມີຄວາມຕ້ອງການເສບເພີ່ມຂຶ້ນເລື້ອຍໆ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບຕ່າງໆທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ເຄມີຕົ້ນ ໝາຍເຖິງ** ສານເຄມີທີ່ນໍາໃຊ້ ເພື່ອຜະລິດຢາເສບຕິດ;
2. **ອະນຸພັນຂອງຢາເສບຕິດ ໝາຍເຖິງ** ສາຍພັນຂອງຢາເສບຕິດຊະນິດນັ້ນ;
3. **ນໍ້າໜັກສຸດທິ ໝາຍເຖິງ** ນໍ້າໜັກສານບໍລິສຸດຂອງຢາເສບຕິດ ລວມທັງນໍ້າໜັກຂອງສ່ວນປະສົມເຈືອປົນທີ່ບໍ່ແມ່ນສິ່ງເສບຕິດ;

4. **ນ້ຳໜັກສານບໍລິສຸດ ໝາຍເຖິງ** ປະລິມານຄວາມເຂັ້ມຂຸ້ນຂອງຢາເສບຕິດ ຫລື ນ້ຳໜັກຂອງສານເສບຕິດອອກລິດຕໍ່ຈິດ-ປະສາດພຽງຢ່າງດຽວໂດຍບໍ່ນັບເອົາສິ່ງປະສົມເຈືອປົນອື່ນໆ ເຂົ້ານຳ;
5. **ການວິໄຈຄຸນນະພາບຂອງຢາເສບຕິດ ໝາຍເຖິງ** ການວິໄຈຊອກຫາຊະນິດຂອງຢາເສບຕິດ;
6. **ການວິໄຈປະລິມານຂອງຢາເສບຕິດຊະນິດໃດໜຶ່ງ ໝາຍເຖິງ** ການວິໄຈຊອກຫາປະລິມານຄວາມເຂັ້ມຂຸ້ນຂອງຢາເສບຕິດ ຫຼື ຊອກຫາປະລິມານຂອງສານບໍລິສຸດຂອງຢາເສບຕິດຊະນິດນັ້ນ;
7. **ການຄວບຄຸມຢາເສບຕິດ ໝາຍເຖິງ** ການຄຸ້ມຄອງ, ການຈຳກັດ ການຜະລິດ, ການປຸງແຕ່ງ, ການຄົ້ນຄວ້າວິທະຍາສາດ, ການນຳເຂົ້າ, ການສົ່ງອອກ, ການນຳຜ່ານ ແລະ ການນຳໃຊ້ສານເສບຕິດ;
8. **ການສະກັດກັ້ນຢາເສບຕິດ ໝາຍເຖິງ** ການປ້ອງກັນບໍ່ໃຫ້ຢາເສບຕິດມີຢູ່ ສປປ ລາວ ດ້ວຍວິທີການຕ່າງໆ;
9. **ການຕ້ານຢາເສບຕິດ ໝາຍເຖິງ** ການປາບປາມຢາເສບຕິດເກືອດຫ້າມ ລວມທັງການແກ້ໄຂຜົນຮ້າຍຈາກຢາເສບຕິດ;
10. **ພືດທີ່ໃຫ້ຢາເສບຕິດ ໝາຍເຖິງ** ຕົ້ນຝິ່ນ, ຕົ້ນກັນຊາ, ຕົ້ນໂກກາ ແລະ ຕົ້ນອື່ນໆ ທີ່ໃຫ້ ສານເສບຕິດ;
11. **ສານເສບຕິດ ໝາຍເຖິງ** ສານກະຕຸ້ນ ຫລື ລະງັບລະບົບປະສາດ ເຮັດໃຫ້ຜູ້ນຳໃຊ້ຕິດ ໄດ້ຢ່າງງ່າຍດາຍ;
12. **ຢາເສບຕິດເກືອດຫ້າມ ໝາຍເຖິງ** ຢາເສບຕິດ ທີ່ບໍ່ອະນຸຍາດໃຫ້ປູກ, ຜະລິດ, ປຸງແຕ່ງ, ຊື້-ຂາຍ, ຈຳໜ່າຍ, ມີໄວ້ໃນຄອບຄອງ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ສປປ ລາວ, ນຳໃຊ້ ຫລື ເສບ ຢ່າງເດັດຂາດ ;
13. **ການນຳໃຊ້ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ຢ່າງຖືກຕ້ອງ ໝາຍເຖິງ** ການນຳໃຊ້ວັດຖຸດັ່ງກ່າວ ໂດຍຖືກຕາມມາດຕະຖານ ແລະ ຕາມຫລັກການວິຊາສະເພາະ;
14. **ຜູ້ມີຄວາມສ່ຽງຕໍ່ຢາເສບຕິດ ໝາຍເຖິງ** ຜູ້ທີ່ມີທ່າອ່ຽງ ແລະ ຈະກ້າວໄປເປັນຜູ້ຕິດຢາເສບຕິດ ເຊັ່ນ: ກຸ່ມໄວໜຸ່ມທີ່ຂາດຄວາມອົບອຸ່ນຈາກຄອບຄົວ;
15. **ຜູ້ຕິດຢາເສບຕິດ ໝາຍເຖິງ** ຜູ້ເສບ ແລະ ມີຄວາມຕ້ອງການຢາເສບຕິດເພີ່ມຂຶ້ນເລື້ອຍໆ;
16. **ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ໝາຍເຖິງ** ບ່ອນບຳບັດປິ່ນປົວເພື່ອອອກຈາກຢາເສບຕິດ ພ້ອມທັງມີການຝຶກວິຊາຊີບເບື້ອງຕົ້ນ;
17. **ການຖອດຣິດ ໝາຍເຖິງ** ການສະກັດ, ການກັ່ນຕອງ, ການແຍກເອົາສານເສບຕິດອອກຈາກພືດທີ່ໃຫ້ສານເສບຕິດ ຫຼື ສານເຄມີ ເຊັ່ນ: ຢາງຄັນຊາ;
18. **ການເສບ ໝາຍເຖິງ** ການນຳໃຊ້ຢາເສບຕິດດ້ວຍວິທີການ ກິນ, ດົມ, ດື່ມ, ສູບ, ສັກເຂົ້າ ໃນ ເສັ້ນເລືອດ ຫລື ດ້ວຍວິທີການອື່ນ.

**ມາດຕາ 4. ນະໂຍບາຍກ່ຽວກັບການແກ້ໄຂບັນຫາຢາເສບຕິດ**

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມທົ່ວປວງຊົນດ້ວຍຫຼາຍຮູບການ ເພື່ອສ້າງຈິດສໍານຶກໃຫ້ຄົນໃນສັງຄົມ ເຫັນໄດ້ຜົນຮ້າຍ ແລະ ພິດໄພຂອງຢາເສບຕິດ, ມີນະໂຍບາຍຊຸກຍູ້ສົ່ງເສີມບຸກຄົນ, ຄອບຄົວ, ການຈັດຕັ້ງທຸກພາກສ່ວນ ໃຫ້ເຂົ້າຮ່ວມໃນການເຄື່ອນໄຫວຂອງລັດ ເພື່ອຄຸ້ມຄອງ, ຄວບຄຸມ, ກວດກາ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ລວມທັງ ການແກ້ໄຂຜົນຮ້າຍຂອງມັນ; ສະໜອງງົບປະມານ, ພາຫະນະ ແລະ ວັດຖຸອຸປະກອນ ໃຫ້ແກ່ວຽກງານຢາເສບຕິດ ພ້ອມທັງຮັກສາຄວາມລັບ, ປົກປ້ອງ ແລະ ຄຸ້ມຄອງຄວາມປອດໄພ ໃຫ້ແກ່ຜູ້ທີ່ໃຫ້ການຮ່ວມມືໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

**ມາດຕາ 5. ຫຼັກການກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ຫຼັກການພື້ນຖານ ກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ມີດັ່ງນີ້:

1. ລັດ ເປັນຜູ້ຄຸ້ມຄອງ, ຄວບຄຸມ, ກວດກາ ຢ່າງລວມສູນ ເປັນເອກະພາບ ກ່ຽວກັບຢາເສບຕິດ ໃນທົ່ວປະເທດ;
2. ການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ແມ່ນໜ້າທີ່ຂອງທຸກຄົນ ແລະ ການຈັດຕັ້ງໃນທົ່ວສັງຄົມ;
3. ໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕ້ອງຖືເອົາການສະກັດກັ້ນເປັນພື້ນຖານ, ການຕ້ານເປັນສໍາຄັນ ແລະ ການຄວບຄຸມເປັນສິ່ງທີ່ຂາດບໍ່ໄດ້;
4. ການແກ້ໄຂຜົນຮ້າຍຂອງຢາເສບຕິດ ຕ້ອງເລີ່ມຈາກ ບຸກຄົນ, ຄອບຄົວ ໂດຍມີສ່ວນຮ່ວມຂອງການຈັດຕັ້ງ ແລະ ສັງຄົມ;
5. ຜູ້ຕິດຢາເສບຕິດ ໃຫ້ຖືເປັນຜູ້ຖືກເຄາະຮ້າຍ ທີ່ຕ້ອງໄດ້ຮັບການປິ່ນປົວ.

**ມາດຕາ 6. ພັນທະກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຕ້ອງເປັນເຈົ້າການໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ມີພັນທະໃຫ້ຂໍ້ມູນຂ່າວສານ ແລະ ຄວາມຮ່ວມມື ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານດັ່ງກ່າວ.

ຊາວຕ່າງປະເທດ ທີ່ເຂົ້າມາ, ອອກໄປ, ເດີນທາງຜ່ານ ຫລື ເຂົ້າມາທ່ອງທ່ຽວຢູ່ ສປປ ລາວ ມີພັນທະປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

**ມາດຕາ 7. ການພົວພັນ ແລະ ຮ່ວມມືສາກົນ**

ລັດສົ່ງເສີມການພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ບົນພື້ນຖານຫຼັກການເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ການພົວພັນ ແລະ ຮ່ວມມືສາກົນ ຕ້ອງສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

# ພາກທີ II

# ປະເພດ ແລະ ຜົນຮ້າຍຂອງຢາເສບຕິດ

## ໝວດທີ 1

## ປະເພດຢາເສບຕິດ

**ມາດຕາ 8. ປະເພດຢາເສບຕິດ**

ຢາເສບຕິດ ແບ່ງອອກເປັນສອງປະເພດ ດັ່ງນີ້:

1. ຢາເສບຕິດເກືອດຫ້າມ;
2. ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້.

**ມາດຕາ 9. ຢາເສບຕິດເກືອດຫ້າມ**

ຢາເສບຕິດເກືອດຫ້າມ ແມ່ນຢາເສບຕິດ ຊຶ່ງມີທັງຊະນິດກະຕຸ້ນ ຫຼື ລະງັບປະສາດ ຢ່າງຮ້າຍແຮງ ເຊັ່ນ: ເຮໂຣອິນ, ຢາບ້າ, ໂຄເຄນ, ຢາອີ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ ໃນເອກະສານສະເພາະ.

ຢາເສບຕິດເກືອດຫ້າມ ແມ່ນບໍ່ອະນຸຍາດໃຫ້ນຳໃຊ້ຢ່າງເດັດຂາດ.

**ມາດຕາ 10. ຢາເສບຕິດ ແລະ ສານເຄມີທີ່ຖືກຄວບຄຸມການນຳໃຊ້**

ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ແມ່ນຢາເສບຕິດ ຊຶ່ງມີທັງຊະນິດກະຕຸ້ນ ຫຼື ລະງັບປະສາດ ທີ່ໄດ້ກຳນົດໄວ້ໃນເອກະສານສະເພາະ ເຊັ່ນ: ມອກຟີນ, ຢາຝິ່ນ, ໂກເດອີນ, ເມຕາໂດນ, ແຟນແຕກມີນ, ມີດາໂຊລຳ, ອາໂມບາກບີຕານ, ອາເຊຕິກແອນຮາຍໄດ, ອາເຊີຕົນກລໍຣາຍ ແລະ ອື່ນໆ.

ຢາເສບຕິດ ແລະ ສານເຄມີ ດັ່ງກ່າວ ຖືກນຳໃຊ້ເຂົ້າໃນວິທະຍາສາດການແພດ, ອຸດສາຫະກຳ, ກະສິກຳ ແລະ ອື່ນໆ ໂດຍມີການຄວບຄຸມຢ່າງເຂັ້ມງວດ.

## ໝວດທີ 2

## ຜົນຮ້າຍຂອງຢາເສບຕິດເກືອດຫ້າມ

**ມາດຕາ 11. ຜົນຮ້າຍຕໍ່ຜູ້ເສບ**

ຢາເສບຕິດເກືອດຫ້າມ ມີຜົນຮ້າຍ ທີ່ເປັນອັນຕະລາຍຕໍ່ຮ່າງກາຍ ແລະ ຊີວິດຂອງຜູ້ເສບ, ເຮັດໃຫ້ບົດບາດ, ກຽດສັກສີ ແລະ ອະນາຄົດຂອງຕົນຕົກຕໍ່າ, ສະໝອງຖືກທຳລາຍກາຍເປັນບ້າ, ເສຍຈິດ, ໃຊ້ຄວາມຮຸນແຮງ, ທຳລາຍຊີວິດ ຂອງຕົນເອງ ແລະ ຜູ້ອື່ນ.

**ມາດຕາ 12. ຜົນຮ້າຍຕໍ່ຜູ້ຜະລິດ ແລະຜູ້ກະທຳອື່ນ**

ຜູ້ຜະລິດ, ປຸງແຕ່ງ, ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ສປປ ລາວ ຢາເສບຕິດເກືອດຫ້າມ ຈະເສຍບົດບາດ, ກຽດສັກສີ, ອະນາຄົດ, ຈະຖືກດຳເນີນຄະດີ ແລະ ລົງໂທດ ຕາມກົດໝາຍ.

**ມາດຕາ 13. ຜົນຮ້າຍຕໍ່ຄອບຄົວ**

ຜູ້ຕິດຢາເສບຕິດ ຈະເຮັດໃຫ້ຄອບຄົວເກີດມີຄວາມວຸ້ນວາຍ, ແຕກແຍກ, ເສຍຊື່ສຽງຄອບຄົວ ແລະ ວົງຕະກຸນ, ທຳລາຍສຸຂະພາບ, ຊີວິດ ແລະ ຊັບສິນ ໃນຄອບຄົວ.

**ມາດຕາ 14. ຜົນຮ້າຍຕໍ່ສັງຄົມ**

ຜູ້ຕິດຢາເສບຕິດ ກໍ່ໃຫ້ເກີດມີສິ່ງຫຍໍ້ທໍ້ ແລະ ອາດຊະຍາກຳ, ທຳລາຍ ແລະ ຂົ່ມຂູ່ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 15. ຜົນຮ້າຍຕໍ່ປະເທດຊາດ**

ຢາເສບຕິດເກືອດຫ້າມ ເປັນອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຕໍ່ປະຊາຊົນ ເປັນຕົ້ນ: ຊາວໜຸ່ມ, ເຍົາວະຊົນ ທີ່ເປັນອະນາຄົດຂອງຊາດ, ຜູ້ຕິດຢາເສບຕິດ ບໍ່ສາມາດປະຕິບັດໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ບໍ່ສາມາດເປັນກຳລັງແຮງ ໃນການສ້າງສາພັດທະນາປະເທດຊາດ.

## ພາກທີ III
## ການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

### ໝວດທີ 1
### ການຄວບຄຸມຢາເສບຕິດ ແລະສານເຄມີ

**ມາດຕາ 16. ການຄວບຄຸມຢາເສບຕິດ ແລະ ສານເຄມີ**

ການຄວບຄຸມຢາເສບຕິດ ແລະ ສານເຄມີ ປະກອບມີດັ່ງນີ້:

1. ການຄວບຄຸມການຜະລິດ, ປຸງແຕ່ງ;
2. ການຄວບຄຸມການຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ;
3. ການຄວບຄຸມການນຳໃຊ້.

**ມາດຕາ 17. ການຄວບຄຸມການຜະລິດ, ປຸງແຕ່ງ**

ການຜະລິດ, ການປຸງແຕ່ງຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ຊຶ່ງມີຄວາມຈຳເປັນ ເພື່ອນຳໃຊ້ເຂົ້າໃນວຽກງານສາທາລະນະສຸກ ແລະ ວຽກງານວິທະຍາສາດ, ການຄົ້ນຄວ້າທົດລອງ, ການອຸດສາຫະກຳ, ການກະສິກຳ ແມ່ນອະນຸຍາດ ແຕ່ຕ້ອງມີການຄຸ້ມຄອງ, ກວດກາ ແລະ ຄວບຄຸມຢ່າງເຂັ້ມງວດ ຈາກອົງການທີ່ກ່ຽວຂ້ອງຂອງລັດ.

**ມາດຕາ 18. ການຄວບຄຸມການຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ**

ການຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ສປປ ລາວ ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ຊຶ່ງມີຄວາມຈຳເປັນ ເພື່ອນຳໃຊ້ເຂົ້າໃນວຽກງານສາທາລະນະສຸກ ແລະ ວຽກງານວິທະຍາສາດ, ການຄົ້ນຄວ້າທົດລອງ, ການອຸດສາຫະກຳ, ການກະສິກຳ ແມ່ນອະນຸຍາດ ແຕ່ຕ້ອງມີການຄຸ້ມຄອງ, ກວດກາ ແລະ ຄວບຄຸມຢ່າງເຂັ້ມງວດ ຈາກອົງການທີ່ກ່ຽວຂ້ອງຂອງລັດ.

**ມາດຕາ 19. ການຄວບຄຸມການນຳໃຊ້**

ການນຳໃຊ້ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ໃນຂົງເຂດສາທາລະນະສຸກ, ອຸດສາຫະກຳ, ກະສິກຳ ແລະ ຂົງເຂດອື່ນ ຕ້ອງມີການຄຸ້ມຄອງ, ກວດກາ ແລະ ຄວບຄຸມຢ່າງເຂັ້ມງວດ.

ໃນກໍລະນີທີ່ການນຳໃຊ້ຢາເສບຕິດ ແລະ ສານເຄມີ ດັ່ງກ່າວ ບໍ່ຖືກຕ້ອງ ຕາມຫຼັກວິຊາການ ແລະ ລະບຽບການ ກໍຈະເປັນໄພອັນຕະລາຍຕໍ່ບຸກຄົນ, ຄອບຄົວ, ສັງຄົມ ແລະ ຈະຖືກລົງໂທດຕາມກົດໝາຍ.

## ໝວດທີ 2
## ການສະກັດກັ້ນຢາເສບຕິດເກືອດຫ້າມ

**ມາດຕາ 20. ວິທີການສະກັດກັ້ນຢາເສບຕິດເກືອດຫ້າມ**

ວິທີການສະກັດກັ້ນຢາເສບຕິດເກືອດຫ້າມ ມີດັ່ງນີ້:

1. ການໂຄສະນາ;
2. ການສຶກສາອົບຮົມ;
3. ການບໍ່ອະນຸຍາດໃຫ້ປູກ, ຜະລິດ ແລະ ປຸງແຕ່ງ ຢາເສບຕິດ;
4. ການບໍ່ອະນຸຍາດໃຫ້ ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ສປປ ລາວ;
5. ການບໍ່ອະນຸຍາດໃຫ້ນຳໃຊ້;
6. ການມີສ່ວນຮ່ວມຂອງ ຄອບຄົວ ແລະ ສັງຄົມ;
7. ການພົວພັນ ແລະ ຮ່ວມມືສາກົນ.

**ມາດຕາ 21. ການໂຄສະນາ**

ເພື່ອປ້ອງກັນບໍ່ໃຫ້ຄົນໃນສັງຄົມຕົກເປັນທາດຂອງຢາເສບຕິດ ລັດ ແລະ ສັງຄົມ ຕ້ອງໄດ້ດຳເນີນການໂຄສະນາຢ່າງກວ້າງຂວາງ ດ້ວຍຫຼາຍຮູບການ, ຫລາຍວິທີການ ແລະ ຫລາຍລະດັບ ເພື່ອສ້າງຈິດສຳນຶກໃຫ້ສັງຄົມເຫັນໄດ້ເຖິງພິດໄພ ແລະ ຜົນຮ້າຍຂອງຢາເສບຕິດ ເພື່ອເປັນເຈົ້າການປະກອບສ່ວນເຂົ້າໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

**ມາດຕາ 22. ການສຶກສາອົບຮົມ**

ລັດ ແລະ ສັງຄົມ ຈັດຕັ້ງການສຶກສາອົບຮົມ, ໃຫ້ຄຳປຶກສາ ແລະ ແນະນຳ ຕໍ່ກຸ່ມເປົ້າໝາຍ ແລະ ກຸ່ມທີ່ມີຄວາມສ່ຽງຕໍ່ຢາເສບຕິດ ເພື່ອໃຫ້ເຫັນໄດ້ໄພອັນຕະລາຍ ແລະ ຜົນຮ້າຍ, ຢູ່ຫ່າງໄກ ແລະ ບໍ່ໃຫ້ຕົກເປັນທາດ ຂອງຢາເສບຕິດ.

**ມາດຕາ 23. ການບໍ່ອະນຸຍາດໃຫ້ ປູກ, ຜະລິດ ແລະ ປຸງແຕ່ງ ຢາເສບຕິດ**

ລັດ ບໍ່ອະນຸຍາດໃຫ້ ປູກ, ຜະລິດ ແລະ ປຸງແຕ່ງ ຢາເສບຕິດເກືອດຫ້າມ. ພ້ອມກັນນັ້ນລັດກໍຕ້ອງສົ່ງເສີມ, ແນະນຳ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນຫັນປ່ຽນໄປສູ່ອາຊີບອື່ນ ທີ່ໝັ້ນຄົງ, ຖາວອນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 24. ການບໍ່ອະນຸຍາດໃຫ້ ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ຢາເສບຕິດ**

ລັດ ບໍ່ອະນຸຍາດໃຫ້ ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ສປປ ລາວ ຢາເສບຕິດເກືອດຫ້າມ.

**ມາດຕາ 25. ການບໍ່ອະນຸຍາດໃຫ້ນຳໃຊ້ຢາເສບຕິດເກືອດຫ້າມ**

ລັດ ບໍ່ອະນຸຍາດໃຫ້ນຳໃຊ້ຢາເສບຕິດເກືອດຫ້າມ ບໍ່ວ່າໃນຂົງເຂດສາທາລະນະສຸກ, ອຸດສາຫະກຳ, ກະສິກຳ ແລະ ຂົງເຂດອື່ນ.

**ມາດຕາ 26. ການມີສ່ວນຮ່ວມຂອງຄອບຄົວ ແລະ ສັງຄົມ**

ຄອບຄົວ ມີສ່ວນຮ່ວມໃນການສະກັດກັ້ນຢາເສບຕິດເກືອດຫ້າມ ຊຶ່ງສະແດງອອກດ້ວຍການໃຫ້ຄວາມອົບອຸ່ນແກ່ສະມາຊິກພາຍໃນຄອບຄົວ, ໃກ້ຊິດຕິດແທດ, ສຶກສາອົບຮົມ, ແນະນຳພ້ອມທັງປຶກສາຫາລື ແລກປ່ຽນບົດຮຽນ ແລະ ຄຳຄິດເຫັນ ຊຶ່ງກັນແລະກັນ ເພື່ອໃຫ້ຮູ້ເຖິງໄພອັນຕະລາຍ ແລະ ຜົນຮ້າຍຂອງຢາເສບຕິດເກືອດຫ້າມ, ຕິດຕາມການເຄື່ອນໄຫວ ແລະ ການພົວພັນກັບພາຍນອກຂອງສະມາຊິກຄອບຄົວ ເພື່ອຫລີກເວັ້ນຈາກການຕົກເປັນທາດຂອງຢາເສບຕິດ.

ສັງຄົມ ມີສ່ວນຮ່ວມໃນການສະກັດກັ້ນຢາເສບຕິດເກືອດຫ້າມ ຊຶ່ງສະແດງອອກໃນການໂຄສະນາ, ສຶກສາອົບຮົມໃຫ້ສະມາຊິກໃນການຈັດຕັ້ງຂອງຕົນຮູ້ເຖິງໄພອັນຕະລາຍ ແລະ ຜົນຮ້າຍຂອງຢາເສບຕິດເກືອດຫ້າມ, ສ້າງກິດຈະກຳຕ່າງໆ ເປັນຕົ້ນ ກິລາ-ກາຍຍະກຳ, ສິລະປະວັນນະຄະດີ, ຫໍສະໝຸດ, ການທ່ອງທ່ຽວ ເພື່ອສົ່ງເສີມໃຫ້ສະມາຊິກຂອງຕົນໄດ້ເຂົ້າຮ່ວມ ແລະ ພາກັນຢູ່ຫ່າງໄກຈາກຢາເສບຕິດດັ່ງກ່າວ, ຕິດຕາມການເຄື່ອນໄຫວຂອງສະມາຊິກຕົນ, ໃຫ້ຂໍ້ມູນຂ່າວສານກ່ຽວກັບຢາເສບຕິດນັ້ນ ພ້ອມທັງ ຕິດຕາມຄົນບໍ່ດີທີ່ເຂົ້າມາເຄື່ອນໄຫວຢູ່ໃນສັງຄົມຂອງຕົນ.

## ໝວດທີ 3
## ການຕ້ານຢາເສບຕິດເກືອດຫ້າມ

### ມາດຕາ 27. ການຕ້ານຢາເສບຕິດເກືອດຫ້າມ

ຢາເສບຕິດເກືອດຫ້າມ ເປັນໄພອັນຕະລາຍຄຸກຄາມ ເຖິງຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ກິດໜ່ວງຖ່ວງດຶງການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຈຶ່ງຕ້ອງນຳໃຊ້ມາດຕະການຕ່າງໆ ຢ່າງເດັດຂາດ ແລະ ເຂັ້ມງວດ ເພື່ອຕ້ານຢາເສບຕິດເກືອດຫ້າມ .

### ມາດຕາ 28. ເປົ້າໝາຍການຕ້ານຢາເສບຕິດເກືອດຫ້າມ

ເປົ້າໝາຍການຕ້ານຢາເສບຕິດເກືອດຫ້າມ ມີດັ່ງນີ້:

1. ຕົວການທີ່ເຮັດທຸລະກິດຢາເສບຕິດ;
2. ຜູ້ປູກ, ຜະລິດ, ປຸງແຕ່ງ;
3. ຜູ້ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ຂົນສົ່ງ, ນຳເຂົ້າ, ສົ່ງອອກ, ນຳຜ່ານ ສປປ ລາວ ຢາເສບຕິດ;
4. ຜູ້ໃຫ້ການບໍລິການ;
5. ຜູ້ເສບ;
6. ຜູ້ເຂົ້າຮ່ວມຂະບວນການ ຢາເສບຕິດເກືອດຫ້າມ.

### ມາດຕາ 29. ວິທີການຕ້ານຢາເສບຕິດເກືອດຫ້າມ

ການຕ້ານຢາເສບຕິດເກືອດຫ້າມ ມີວິທີການຕົ້ນຕໍດັ່ງນີ້:

1. ອອກລະບຽບການ ກ່ຽວກັບຢາເສບຕິດເກືອດຫ້າມ ຢ່າງຮັດກຸມ ແລະ ເປັນລະບົບຄົບຊຸດ;
2. ສ້າງ, ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ ກ່ຽວກັບວຽກງານຢາເສບຕິດ ໃຫ້ຄົບຖ້ວນ ແຕ່ສູນກາງລົງຮອດຮາກຖານ ໃຫ້ມີຄຸນນະພາບທາງດ້ານວິຊາການ ແລະ ມີຄວາມໂປ່ງໃສ;
3. ສົ່ງເສີມການສ້າງວຽກເຮັດງານທຳ ແລະ ປະກອບອາຊີບອື່ນ ທົດແທນການປູກພືດໃຫ້ສານເສບຕິດ;
4. ສ້າງບ້ານ ພັດທະນາໃຫ້ມີຄວາມເຂັ້ມແຂງ ປອດຈາກ ການປູກພືດໃຫ້ສານເສບຕິດ, ການຜະລິດ, ປຸງແຕ່ງ, ເສບ, ຄ້າຂາຍ ແລະ ຈຳໜ່າຍຢາເສບຕິດ;
5. ສະໜອງງົບປະມານ, ປະກອບພາຫະນະ, ອຸປະກອນ, ພື້ນຖານວັດຖຸເຕັກນິກທີ່ຈຳເປັນ ໃຫ້ແກ່ການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ລວມທັງ ສູນ ຫຼື ຫ້ອງວິໄຈ, ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແລະ ອື່ນໆ;
6. ເກັບກຳ, ຄົ້ນຄວ້າຂໍ້ມູນ ແລະ ຂຶ້ນບັນຊີເປົ້າໝາຍທີ່ກ່ຽວຂ້ອງກັບຢາເສບຕິດ;
7. ເປີດຂະບວນການຕ້ານ, ກວາດລ້າງເປົ້າໝາຍ ໂດຍມີການເຂົ້າຮ່ວມຂອງປວງຊົນ, ກຳລັງປະກອບອາວຸດ, ໃນນັ້ນ ອີງການກວດກາ ແລະ ຄວບຄຸມຢາເສບຕິດເປັນຫຼັກແຫຼ່ງ;

8. ດຳເນີນຄະດີ, ລົງໂທດຜູ້ກະທຳຜິດ ຕາມລະບຽບກົດໝາຍຢ່າງເຂັ້ມງວດ;
9. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ບັນດາປະເທດໃກ້ຄຽງ ເປັນຕົ້ນ ຕາມບໍລິເວນຊາຍແດນ ເພື່ອແກ້ໄຂບັນຫາຢາເສບຕິດ;
10. ສະຫຼຸບ, ຖອດຖອນບົດຮຽນເປັນແຕ່ລະບັ້ນ ແລະ ເປັນແຕ່ລະໄລຍະ ກ່ຽວກັບວຽກງານການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

## ໝວດທີ 4
## ການດຳເນີນຄະດີ ກ່ຽວກັບຢາເສບຕິດ

### ມາດຕາ 30. ຄວາມສຳຄັນຂອງການດຳເນີນຄະດີ

ການດຳເນີນຄະດີ ກ່ຽວກັບຢາເສບຕິດ ມີຄວາມສຳຄັນ, ຫຍຸ້ງຍາກ, ສັບສົນເປັນພິເສດ ແລະ ເປັນອັນຕະລາຍ ຊຶ່ງຕ້ອງດຳເນີນໃຫ້ຖືກເປົ້າໝາຍ, ຄ່ອງແຄ້ວ, ວ່ອງໄວທັນການ, ຊັດເຈນ, ເຂັ້ມງວດ ແລະ ຖືກຕ້ອງຕາມກົດໝາຍ.

### ມາດຕາ 31. ການດຳເນີນຄະດີ ກ່ຽວກັບຢາເສບຕິດ

ການດຳເນີນຄະດີ ກ່ຽວກັບຢາເສບຕິດ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແຕ່ຕ້ອງເອົາໃຈໃສ່ບັນຫາທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຄື: ຄວາມຊັດເຈນຖືກເປົ້າໝາຍ, ຂອງກາງ, ການຊັດທອດ, ຄວາມວ່ອງໄວ, ຄວາມໂປ່ງໃສ, ການປັບໃໝແລ້ວປ່ອຍຕົວ.

### ມາດຕາ 32. ຄວາມຊັດເຈນ ຖືກເປົ້າໝາຍ ແລະ ຄວາມໂປ່ງໃສ

ການດຳເນີນຄະດີ ກ່ຽວກັບຢາເສບຕິດ ຕ້ອງຊັດເຈນ, ຖືກເປົ້າໝາຍ, ຜູ້ກະທຳຜິດຕົວຈິງ, ວ່ອງໄວ ໂດຍມີພະຍານ, ຫຼັກຖານທີ່ໜັກແໜ້ນ, ຮັດກຸມ.

ການດຳເນີນຄະດີ ຕ້ອງໂປ່ງໃສ ແລະ ຫ້າມທຳການປັບໃໝແລ້ວປ່ອຍຕົວຜູ້ຖືກຫາ ໂດຍບໍ່ດຳເນີນຄະດີຕາມລະບຽບກົດໝາຍ.

### ມາດຕາ 33. ການກວດຄົ້ນເຄຫະສະຖານ

ກ່ອນຈະມີການກວດຄົ້ນເຄຫະສະຖານນັ້ນ ຕ້ອງໃຫ້ມີຄຳສັ່ງກວດຄົ້ນຂອງໄອຍະການປະຊາຊົນ ຫຼື ສານປະຊາຊົນ ເວັ້ນເສຍແຕ່ໃນກໍລະນີທີ່ມີຄວາມຈຳເປັນອັນຮີບດ່ວນ ແຕ່ກໍຕ້ອງລາຍງານໃຫ້ໄອຍະການປະຊາຊົນຊາບ ພາຍໃນກຳນົດຊາວສີ່ຊົ່ວໂມງ ພາຍຫຼັງທີ່ການກວດຄົ້ນໄດ້ສິ້ນສຸດແລ້ວ.

ການກວດຄົ້ນ ຕ້ອງເຮັດຊ້ອງໜ້າເຈົ້າຂອງເຄຫະສະຖານ, ອົງການປົກຄອງບ້ານ ແລະ ພະຍານຢ່າງໜ້ອຍສອງຄົນ.

ກ່ອນ ແລະ ຫຼັງ ການກວດຄົ້ນນັ້ນ ເຈົ້າໜ້າທີ່ຕ້ອງສະແດງຄວາມບໍລິສຸດໃຈຕໍ່ບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ.

ການກວດຄົ້ນໃນແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກຢາເສບຕິດ, ຂອງກາງ ແລະ ສິ່ງອື່ນໆ ທີ່ຜິດກົດໝາຍ ຢ່າງລະອຽດຄົບຖ້ວນ ໂດຍໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ເຂົ້າຮ່ວມທັງໝົດ ເຊັນ ແລະ ແປະໂປ້ ຢູ່ກັບທີ່ ເພື່ອຮັບຮູ້ ແລະ ຢັ້ງຢືນ.

**ມາດຕາ 34. ຂອງກາງ**

ຂອງກາງ ກ່ຽວກັບຄະດີຢາເສບຕິດ ເປັນພື້ນຖານໃຫ້ແກ່ການຈັບຕົວ, ການດຳເນີນຄະດີ ແລະ ຕັດສິນລົງໂທດຜູ້ກະທຳຜິດ.

ຂອງກາງ ທີ່ເປັນຢາເສບຕິດ ຊຶ່ງພົບເຫັນ ແລະຍຶດໄດ້ ຕ້ອງກວດກາ, ຕິດຊັ່ງ, ບັນທຶກ ແລ້ວສົ່ງໄປວິໄຈໃຫ້ວ່ອງໄວ. ຂອງກາງດັ່ງກ່າວ ຕ້ອງຄຸ້ມຄອງ ແລະ ເກັບມ້ຽນຢູ່ບ່ອນທີ່ຮັບປະກັນ ບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກປ່ຽນແທນ. ການມອບຮັບຂອງກາງ ກ່ຽວກັບຄະດີຢາເສບຕິດໃຫ້ກັນໃນແຕ່ລະຄັ້ງ ຕ້ອງມີການກວດກາຄືນ ແລະຢັ້ງຢືນໃຫ້ຖືກຕ້ອງ ຕາມບົດບັນທຶກເບື້ອງຕົ້ນ.

ຂອງກາງ ກ່ຽວກັບຄະດີຢາເສບຕິດ ເປັນຕົ້ນ ເງິນ, ຄຳ , ພາຫະນະ ແລະ ຊັບສິນອື່ນໆ ແມ່ນບໍ່ໃຫ້ນຳໃຊ້ ແລະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ.

ໃນກໍລະນີທີ່ມີການຮັບສາລະພາບຂອງຜູ້ຖືກຫາ ແຕ່ບໍ່ມີຂອງກາງນັ້ນ ຕ້ອງໄດ້ຊອກຫາພະຍານ, ຫຼັກຖານອື່ນ ໃນຄະດີມາຢັ້ງຢືນ ເພື່ອຕັດສິນ.

**ມາດຕາ 35. ການຍຶດ, ການອາຍັດ ແລະ ການຮິບ ວັດຖຸສິ່ງຂອງ**

ຊັບສິນ, ພາຫະນະ, ອຸປະກອນ ທີ່ພົວພັນກັບຄະດີຢາເສບຕິດ ຕ້ອງຖືກຍຶດ ແລະ ອາຍັດ ມາເປັນຂອງກາງ ຕາມລະບຽບກົດໝາຍ ເພື່ອລໍຖ້າການຕັດສິນຂອງສານ.

ຂອງກາງທີ່ສາມາດເສື່ອມຄຸນນະພາບໄວ, ສັດລ້ຽງ ຕ້ອງໄດ້ຂາຍຕາມລາຄາໃນທ້ອງຕະຫຼາດ ໃນເວລານັ້ນ ໂດຍມີການຕົກລົງເຫັນດີຂອງຄະນະກຳມະການກວດສອບຊັບສິນ ແລ້ວເອົາເງິນຈາກການຂາຍຊັບສິນນັ້ນ ໄປຝາກໄວ້ຢູ່ທະນາຄານ.

ສຳລັບຂອງກາງທີ່ມີຄ່າ ເປັນຕົ້ນ: ເພັດ, ຄຳ, ເງິນ ແລະ ວັດຖຸມີຄ່າອື່ນໆ ຕ້ອງເຮັດບົດບັນທຶກ ໂດຍບົ່ງບອກຈຳນວນ, ປະເພດ, ຊະນິດ, ຮູບປະພັນ, ລັກສະນະ, ນ້ຳໜັກ, ຄຸນນະພາບ ແລະ ອື່ນໆ ຢ່າງລະອຽດ ແລ້ວນຳໄປຝາກໄວ້ຢູ່ທະນາຄານ.

ຊັບສິນ, ພາຫະນະ, ອຸປະກອນ ແລະ ຂອງກາງອື່ນ ທີ່ພົວພັນກັບຢາເສບຕິດ ຈະຖືກຮິບຕາມຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ, ຖ້າຫາກສານບໍ່ຕັດສິນຮິບແລ້ວ ກໍຈະຖືກສົ່ງຄືນໃຫ້ແກ່ຜູ້ເປັນເຈົ້າຂອງ.

ຂອງກາງທີ່ເປັນຢາເສບຕິດ ຕ້ອງໄດ້ທຳລາຍ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 36. ການຊັດທອດ**

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍບໍ່ມີຂອງກາງ, ບໍ່ມີຫລັກຖານຮັດກຸມ ແລະ ບຸກຄົນນີ້ ປະຕິເສດບໍ່ຮັບຮູ້ ກໍໃຫ້ຖືວ່າບໍ່ມີການກະທຳຜິດ.

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍມີຂອງກາງ ແລະ ບຸກຄົນນີ້ ຮັບສາລະພາບ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍມີຂອງກາງໜັກແໜ້ນ ຮັດກຸມ ແຕ່ບຸກຄົນນີ້ ຫາກປະຕິເສດບໍ່ຮັບຮູ້ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍບໍ່ມີຂອງກາງ ແຕ່ມີຫລັກຖານຮັດກຸມ ແລະ ບຸກຄົນນີ້ ປະຕິເສດບໍ່ຮັບຮູ້ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

**ມາດຕາ 37. ການອຳນວຍຄວາມສະດວກໃຫ້ແກ່ການດຳເນີນຄະດີ**

ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນຄະດີ ລັດຕ້ອງປະກອບພາຫະນະ, ວັດຖຸອຸປະກອນ, ສະໜອງງົບປະມານ ໃຫ້ແກ່ວຽກງານດຳເນີນຄະດີຢາເສບຕິດ ຢ່າງເໝາະສົມ.

## ໝວດທີ 5
## ການປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບແກ່ຜູ້ຕິດຢາເສບຕິດ

**ມາດຕາ 38. ການປິ່ນປົວຜູ້ຕິດຢາເສບຕິດ**

ການປິ່ນປົວ ຜູ້ຕິດຢາເສບຕິດ ໄດ້ຮັບການສົ່ງເສີມໃນຄອບຄົວ, ຊຸມຊົນ, ໂຮງໝໍ, ສູນປິ່ນປົວ ແລະ ຟື້ນຟູສຸຂະພາບ ຜູ້ຕິດຢາເສບຕິດ ລວມທັງການປິ່ນປົວຢູ່ໃນຄ້າຍຄຸມຂັງ-ດັດສ້າງ.

**ມາດຕາ 39. ການປິ່ນປົວໃນຄອບຄົວ**

ການປິ່ນປົວອອກຢາເສບຕິດ ຕ້ອງເລີ່ມຈາກຄອບຄົວເປັນຜູ້ຮັບຜິດຊອບໃນການຮັກສາຕາມຄຳແນະນຳຂອງແພດ, ນອກຈາກນີ້ ຍັງຕ້ອງໄດ້ເບິ່ງແຍງຢ່າງໃກ້ຊິດ, ໃຫ້ຄວາມອົບອຸ່ນ, ໃຫ້ກຳລັງໃຈ ເພື່ອຊ່ວຍໃຫ້ຜູ້ຕິດຢາເສບຕິດອອກຢາໄດ້ ພ້ອມທັງຟື້ນຟູສຸຂະພາບ, ສືບຕໍ່ຮໍ່າຮຽນ ຫຼື ຊອກວຽກເຮັດງານທຳໃຫ້ຜູ້ອອກຢາເສບຕິດ ທັງຕິດຕາມບໍ່ໃຫ້ກັບຄືນໄປເສບໃໝ່ອີກ.

**ມາດຕາ 40. ການປິ່ນປົວໃນຊຸມຊົນ**

ການປິ່ນປົວຜູ້ຕິດຢາເສບຕິດໃນຊຸມຊົນ ກໍຕ້ອງໄດ້ຮັບການສົ່ງເສີມເຊັ່ນດຽວກັນ ແລະ ຕ້ອງດຳເນີນດ້ວຍການສ້າງສະຖານທີ່ປິ່ນປົວ, ຊອກຫາຢາພື້ນເມືອງ, ຢາຫຼວງມາບຳບັດ, ປຸກລະດົມການປະກອບສ່ວນດ້ານແຮງງານ, ສະບຽງອາຫານ, ວັດຖຸເງິນຄຳຕ່າງໆ. ພາຍຫຼັງທີ່ອອກຢາເສບຕິດແລ້ວ ຊຸມຊົນຊອກວຽກເຮັດງານທຳ, ຕິດຕາມ, ສຶກສາອົບຮົມ ແລະ ເບິ່ງແຍງຜູ້ອອກຢາເສບຕິດ ເພື່ອບໍ່ໃຫ້ກັບຄືນໄປເສບໃໝ່ອີກ.

**ມາດຕາ 41. ການປິ່ນປົວຢູ່ໃນສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ**

ເພື່ອກອບກູ້ເອົາຜູ້ຕິດຢາເສບຕິດນັ້ນ ຕ້ອງສ້າງ ແລະ ປັບປຸງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ບ່ອນທີ່ມີເງື່ອນໄຂ.

ສູນດັ່ງກ່າວຮັບເອົາຜູ້ຕິດຢາເສບຕິດເຂົ້າມາປິ່ນປົວຈາກການມອບສົ່ງຂອງເຈົ້າໜ້າທີ່,ຈາກການຝາກຂອງຄອບຄົວ ຫຼື ຈາກຄວາມສະໝັກໃຈຂອງຜູ້ຕິດຢາເສບຕິດເອງ.

ເມື່ອຮັບເອົາຜູ້ຕິດຢາເສບຕິດແລ້ວ ສູນດັ່ງກ່າວ ມີໜ້າທີ່ສຶກສາອົບຮົມ, ປິ່ນປົວ, ບຳບັດ, ຟື້ນຟູສຸຂະພາບ ລວມທັງຕິດຕາມ ເພື່ອໃຫ້ຄຳປຶກສາແນະນຳແກ່ຜູ້ອອກຢາເສບຕິດ.

ສູນດັ່ງກ່າວ ປະກອບດ້ວຍພະນັກງານຂອງຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ, ເຈົ້າໜ້າທີ່ ແລະ ພະນັກງານວິຊາສະເພາະຈາກຂະແໜງການ ປ້ອງກັນຄວາມສະຫງົບ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ-ສັງຄົມ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ການປິ່ນປົວຜູ້ອອກຢາເສບຕິດ ຢູ່ໃນຄ້າຍຄຸມຂັງ-ດັດສ້າງ ກໍໄດ້ຮັບການສົ່ງເສີມເຊັ່ນດຽວກັນ.

## ມາດຕາ 42. ການຝຶກວິຊາຊີບ

ການຝຶກວິຊາຊີບເບື້ອງຕົ້ນໃຫ້ແກ່ຜູ້ອອກຢາເສບຕິດ ດຳເນີນຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ເພື່ອໃຫ້ສາມາດກັບຄືນເຂົ້າສູ່ສັງຄົມໄດ້ຢ່າງເປັນປົກກະຕິ. ການຝຶກວິຊາຊີບ ຕ້ອງໄປຄຽງຄູ່ກັບການຊອກຕະຫຼາດ ເພື່ອຂາຍຜະລິດຕະພັນ ແນໃສ່ເຮັດໃຫ້ຜູ້ອອກຢາເສບຕິດມີລາຍໄດ້ ເພື່ອເປັນພື້ນຖານໃຫ້ແກ່ການສ້າງຊີວິດໃໝ່.

ສູນດັ່ງກ່າວຍັງມີໜ້າທີ່ຕິດຕໍ່ພົວພັນ, ຊອກວຽກເຮັດງານທຳ ໃຫ້ຜູ້ອອກຢາເສບຕິດ ໃນສັງຄົມ ຕາມເງື່ອນໄຂຕົວຈິງ.

# ໝວດທີ 6
# ການຕິດຕາມຊ່ວຍເຫລືອຜູ້ອອກຢາເສບຕິດ

## ມາດຕາ 43. ການຕິດຕາມຊ່ວຍເຫຼືອຜູ້ອອກຢາເສບຕິດ

ພາຍຫຼັງໄດ້ຮັບການປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນແລ້ວ ຜູ້ອອກຢາເສບຕິດ ຕ້ອງໄດ້ຮັບການຕິດຕາມຊ່ວຍເຫຼືອ, ການໃຫ້ ຄຳແນະນຳ, ຄຳປຶກສາ ແລະ ການຊອກວຽກເຮັດງານທຳ ເພື່ອເຮັດໃຫ້ຜູ້ອອກຢາເສບຕິດ ມີຊີວິດການເປັນຢູ່ຢ່າງເປັນປົກກະຕິ.

ສຳລັບຜູ້ອອກຢາເສບຕິດແລ້ວກັບຄືນມາຕິດໃໝ່ນັ້ນ ຈະໄດ້ຮັບໂທດ ຕາມມາດຕາ 76 ຂອງກົດໝາຍສະບັບນີ້.

## ມາດຕາ 44. ໜ່ວຍງານຊ່ວຍເຫຼືອຜູ້ອອກຢາເສບຕິດ

ເພື່ອຮັບປະກັນການອອກຢາເສບຕິດຢ່າງຖາວອນນັ້ນ ຕ້ອງໄດ້ສ້າງໜ່ວຍງານຊ່ວຍເຫຼືອຜູ້ອອກຢາເສບຕິດ ໂດຍຢູ່ພາຍໃຕ້ການຄຸ້ມຄອງ, ຊີ້ນຳ ຂອງຄະນະກຳມະການ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດຂັ້ນນັ້ນ.

## ມາດຕາ 45. ໜ້າທີ່ຂອງໜ່ວຍງານຊ່ວຍເຫຼືອຜູ້ອອກຢາເສບຕິດ

ໜ່ວຍງານຊ່ວຍເຫຼືອຜູ້ອອກຢາເສບຕິດ ມີໜ້າທີ່ຕົ້ນຕໍ ໃນການເກັບກຳຂໍ້ມູນສະຖິຕິ, ຕິດຕາມກວດກາ, ໃຫ້ຄຳແນະນຳ, ຄຳປຶກສາ ແລະ ການຊ່ວຍເຫຼືອທີ່ຈຳເປັນ ແກ່ຜູ້ອອກຢາເສບຕິດ ລວມທັງ ການຕິດຕໍ່ພົວພັນຊອກວຽກເຮັດງານທຳໃຫ້ຕາມເງື່ອນໄຂຕົວຈິງ ເພື່ອເຮັດໃຫ້ຜູ້ອອກຢາເສບຕິດ ກັບຄືນເຂົ້າສູ່ສັງຄົມໄດ້ຢ່າງເປັນປົກກະຕິ.

## ໝວດທີ 7
## ສູນວິໄຈຢາເສບຕິດ

**ມາດຕາ 46. ຄວາມຈຳເປັນຂອງການສ້າງສູນວິໄຈຢາເສບຕິດ**

ເພື່ອຢັ້ງຢືນວ່າວັດຖຸໃດໜຶ່ງ ແມ່ນຢາເສບຕິດ, ເປັນຢາເສບຕິດປະເພດໃດ, ຊະນິດໃດ, ມີປະລິມານຄວາມເຂັ້ມຂຸ້ນຂອງສານເສບຕິດເທົ່າໃດ ຊຶ່ງຈະເປັນບ່ອນອີງໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ລວມທັງ ການນຳໃຊ້ມາດຕະການລົງໂທດຕໍ່ຜູ້ກະທຳຜິດຢ່າງຖືກຕ້ອງກັບຄວາມຈິງ ແລະ ຍຸຕິທຳນັ້ນ ມີຄວາມຈຳເປັນຕ້ອງໄດ້ສ້າງສູນວິໄຈຢາເສບຕິດ ໃນຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ເຫັນວ່າມີຄວາມຈຳເປັນ ເຊັ່ນ: ຂະແໜງການປ້ອງກັນຄວາມສະຫງົບ, ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນວິໄຈຢາເສບຕິດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 47. ສິດ ແລະ ໜ້າທີ່ຂອງສູນວິໄຈຢາເສບຕິດ**

ສູນວິໄຈຢາເສບຕິດ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

- ກວດ, ພິສູດ, ວິໄຈ ເພື່ອຊອກຫາສານເສບຕິດ, ປະເພດ, ຊະນິດ ແລະ ຄວາມເຂັ້ມຂຸ້ນຂອງສານເສບຕິດ;
- ສະຫຼຸບຜົນຂອງການພິສູດ, ວິໄຈ ເພື່ອຢັ້ງຢືນແກ່ອົງການລັດທີ່ມີໜ້າທີ່ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ລວມທັງອົງການດຳເນີນຄະດີ ແລະ ຜູ້ຖືກຫາ ກ່ຽວກັບຢາເສບຕິດ ຕາມຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
- ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຜົນວິໄຈຢາເສບຕິດ ຂອງຕົນ;
- ປະສານງານ, ແລກປ່ຽນຂໍ້ມູນຂ່າວສານກັບພາຍໃນ, ຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານຢາເສບຕິດ ເປັນຕົ້ນ: ການພິສູດ ແລະ ວິໄຈຢາເສບຕິດ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 8
## ກອງທຶນສະກັດກັ້ນ ແລະ ຕ້ານຢາເສບຕິດ

**ມາດຕາ 48. ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ລັດ ສົ່ງເສີມໃຫ້ສ້າງຕັ້ງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢູ່ສູນກາງ, ແຂວງ, ນະຄອນ ເພື່ອຮັບໃຊ້ວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ລວມທັງ ວຽກງານປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນໃຫ້ແກ່ຜູ້ອອກຢາເສບຕິດ.

**ມາດຕາ 49. ແຫຼ່ງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ແຫຼ່ງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໄດ້ມາຈາກ:

- ງົບປະມານຂອງລັດ ລວມທັງສ່ວນແບ່ງ ຕາມລະບຽບກົດໝາຍງົບປະມານ ຈາກລາຍຮັບທີ່ໄດ້ມາຈາກ ຊັບສິນ, ພາຫະນະ ແລະ ອຸປະກອນ ທີ່ພົວພັນກັບຢາເສບຕິດ ຊຶ່ງສານປະຊາຊົນໄດ້ຕັດສິນຮິບ;
- ການຂາຍຜະລິດຕະພັນຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;
- ການຊ່ວຍເຫຼືອຈາກຕ່າງປະເທດ;
- ການປະກອບສ່ວນຈາກບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
- ການເຄື່ອນໄຫວກິດຈະກຳຫາລາຍໄດ້ໃດໜຶ່ງ ເຊັ່ນ: ການແຂ່ງຂັນກິລາ-ກາຍຍະກຳ, ການສະແດງສິລະປະວັນນະຄະດີ ແລະ ອື່ນໆ.

**ມາດຕາ 50. ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ**

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນສູນກາງ ແມ່ນຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດແຫ່ງຊາດ ເປັນຜູ້ຄຸ້ມຄອງ, ສ່ວນຢູ່ຂັ້ນທ້ອງຖິ່ນ ແມ່ນຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດແຂວງ, ນະຄອນ ເປັນຜູ້ຄຸ້ມຄອງ. ກອງທຶນດັ່ງກ່າວ ແມ່ນນຳໃຊ້ເຂົ້າໃນວຽກງານທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນສະກັດກັ້ນ ແລະ ຕ້ານຢາເສບຕິດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ IV
# ໜ້າທີ່ ແລະ ຄວາມຮັບຜິດຊອບ
# ກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

**ມາດຕາ 51. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງລັດ**

ລັດຖະບານວາງນະໂຍບາຍ, ລະບຽບການ, ມາດຕະການ ກ່ຽວກັບ ການຄຸ້ມຄອງ, ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ການບຳບັດ-ປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນ ໃຫ້ແກ່ຜູ້ອອກຢາເສບຕິດ ລວມທັງ ການສະໜອງງົບປະມານ, ປະກອບພາຫະນະ, ອຸປະກອນ ແລະ ບຸກຄະລາກອນ ໃຫ້ແກ່ວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

ລັດ ຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງ, ກວດກາ ລວມທັງວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16, 20 ແລະ 29 ຂອງກົດໝາຍສະບັບນີ້.

ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຕົ້ນ ແມ່ນ ໂຄສະນາສຶກສາອົບຮົມ ແລະ ປຸກລະດົມຂົນຂວາຍໃຫ້ທຸກພາກສ່ວນໃນສັງຄົມເຂົ້າຮ່ວມໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນໃຫ້ແກ່ ຜູ້ອອກຢາເສບຕິດ.

**ມາດຕາ 52. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພາກສ່ວນຕ່າງໆ**

ພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ: ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງຍຸຕິທຳ, ກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ, ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ມີໜ້າທີ່ ຈັດຕັ້ງໜ່ວຍງານສະເພາະ ແລະ ຊີ້ນຳ, ກວດກາ ສາຍຕັ້ງ ໃນການປະຕິບັດວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 53. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງສັງຄົມ ແລະ ຊຸມຊົນ**

ສັງຄົມ ແລະ ຊຸມຊົນ ມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການໂຄສະນາ, ປຸກລະດົມໃຫ້ທຸກຊັ້ນຄົນເຫັນໄດ້ໄພອັນຕະລາຍຂອງຢາເສບຕິດ ແລະ ພ້ອມກັນສະກັດກັ້ນ, ຊອກຮູ້ ຜູ້ປູກ, ຜູ້ຜະລິດ, ຜູ້ປຸງແຕ່ງ, ຜູ້ຂາຍ, ຜູ້ຈຳໜ່າຍ, ຜູ້ຂົນສົ່ງ, ຜູ້ເສບ ຢາເສບຕິດແລ້ວ ລາຍງານໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ, ໃຫ້ຄວາມຮ່ວມມືໃນການປິ່ນປົວ, ຟື້ນຟູ, ຝຶກວິຊາຊີບເບື້ອງຕົ້ນ ແລະ ຊອກວຽກເຮັດງານທຳ ໃຫ້ແກ່ຜູ້ອອກຢາເສບຕິດ.

**ມາດຕາ 54. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄອບຄົວ**

ຄອບຄົວ ມີບົດບາດສຳຄັນ, ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕໍ່ການສຶກສາອົບຮົມ, ຕິດຕາມກວດກາການເຄື່ອນໄຫວຂອງສະມາຊິກ ພາຍໃນຄອບຄົວ ແລະ ຍາດພີ່ນ້ອງຂອງຕົນ ໃຫ້ຮູ້ເຖິງໄພອັນຕະລາຍຂອງຢາເສບຕິດ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍ ທັງເປັນແບບຢ່າງ, ໃກ້ຊິດຕິດແທດ, ໃຫ້ຄວາມອົບອຸ່ນ, ປຶກສາຫາລື, ໃຫ້ຄຳແນະນຳແກ່ສະມາຊິກພາຍໃນຄອບຄົວ, ເຂົ້າຮ່ວມຂະບວນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ໃຫ້ຄວາມຊ່ວຍເຫຼືອເພື່ອບຳບັດ-ປິ່ນປົວ ເມື່ອສະມາຊິກຄອບຄົວຫາກຕິດຢາເສບຕິດ ພ້ອມກັນນັ້ນ ກໍໃຫ້ຕິດຕາມສະມາຊິກຄອບຄົວທີ່ອອກຢາເສບຕິດແລ້ວ.

**ມາດຕາ 55. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງບຸກຄົນ**

ພົນລະເມືອງລາວທຸກຄົນ ໂດຍສະເພາະຊາວໜຸ່ມ-ເຍົາວະຊົນ ຕ້ອງເປັນເຈົ້າຕົນເອງໃນການສະກັດກັ້ນ ແລະ ຕ້ານຢາເສບຕິດ, ຕ້ານແນວຄິດຢາກທົດລອງເສບຢາເສບຕິດ, ຕ້ອງຟັງຄຳແນະນຳຂອງພໍ່ແມ່, ຜູ້ປົກຄອງ, ຄູ-ອາຈານ. ເມື່ອຕິດຢາເສບຕິດແລ້ວ ກໍຕ້ອງຕັດສິນໃຈເຂົ້າຮັບການປິ່ນປົວອອກຢາເສບຕິດ.

ພົນລະເມືອງທຸກຄົນ ມີໜ້າທີ່ລາຍງານຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເມື່ອໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ຜູ້ປູກ, ຜູ້ຜະລິດ, ຜູ້ປຸງແຕ່ງ, ຜູ້ຂາຍ, ຜູ້ຈຳໜ່າຍ, ຜູ້ຂົນສົ່ງ, ຜູ້ເສບ ແລະ ແຫຼ່ງທີ່ມາ, ບ່ອນຊຸກເຊື່ອງຢາເສບຕິດ ແລະ ຕ້ອງໄດ້ຮັບການປົກປ້ອງ, ຄຸ້ມຄອງຄວາມປອດໄພຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ.

# ພາກທີ V
# ຂໍ້ຫ້າມ ກ່ຽວກັບຢາເສບຕິດ

**ມາດຕາ 56. ຂໍ້ຫ້າມສໍາລັບບຸກຄົນ ແລະ ຄອບຄົວ**

ຂໍ້ຫ້າມສໍາລັບບຸກຄົນ ແລະ ຄອບຄົວ ມີດັ່ງນີ້:

1. ຫ້າມປູກ, ຜະລິດ, ປຸງແຕ່ງ, ຄ້າຂາຍ, ຈໍາໜ່າຍ, ຄອບຄອງ, ຂົນສົ່ງ, ນໍາເຂົ້າ, ສົ່ງອອກ ຫຼື ນໍາຜ່ານ ສປປ ລາວ ຢາເສບຕິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ຫ້າມເສບ ຫຼື ຈັດບໍລິການໃຫ້ເສບ, ຊຸກຍູ້ສົ່ງເສີມ, ຫລອກລວງ ແລະ ບັງຄັບ ໃຫ້ຜູ້ອື່ນໃຊ້ຢາເສບຕິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
3. ຫ້າມປິດບັງ, ປົກປ້ອງ ຫຼື ຊຸກເຊື່ອງ ສະມາຊິກຄອບຄົວ ຫລື ບຸກຄົນອື່ນທີ່ຕິດຢາເສບຕິດ;
4. ຫ້າມຂັດຂວາງ, ນາບຂູ່, ແກ້ແຄ້ນ ຜູ້ເຂົ້າຮ່ວມໃນການສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ການປິ່ນປົວຜູ້ຕິດຢາເສບຕິດ;
5. ຫ້າມໂຄສະນາ ເພື່ອກະຕຸກຊຸກຍູ້ການເສບຢາເສບຕິດ ໂດຍບໍ່ຖືກຕ້ອງຕາມກົດໝາຍທຸກຮູບແບບ ລວມທັງອິນເຕີແນັດ;
6. ຂໍ້ຫ້າມອື່ນ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 57. ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ປົກປ້ອງກົດໝາຍ**

ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ປົກປ້ອງກົດໝາຍ ມີດັ່ງນີ້:

1. ຫ້າມປະຕິບັດວຽກງານດ້ວຍຄວາມບໍ່ໂປ່ງໃສ ເຊັ່ນ: ຮັບສິນບົນ, ປັບໃໝແລ້ວປ່ອຍຕົວຜູ້ຖືກຫາ, ສັບປ່ຽນຂອງກາງຢາເສບຕິດ, ເຮັດບົດບັນທຶກປອມ ຫຼື ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຫລື ຍາດພີ່ນ້ອງ;
2. ຫ້າມປິດບັງ, ຊຸກເຊື່ອງ ແລະ ປົກປ້ອງ ຜູ້ຖືກຫາກ່ຽວກັບຢາເສບຕິດ;
3. ຫ້າມນໍາໃຊ້ຂອງກາງຄະດີ ທີ່ພົວພັນກັບຢາເສບຕິດ ເຊັ່ນ: ຍານພາຫະນະ, ອຸປະກອນ ສື່ສານ, ເງິນ, ຄໍາ ແລະ ຊັບສິນອື່ນໆ;
4. ຫ້າມໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ຜູ້ຖືກຫາ ເພື່ອໃຫ້ຮັບສາລະພາບ;
5. ຫ້າມປົກປ້ອງ, ແຊກແຊງການດໍາເນີນຄະດີ ກ່ຽວກັບຢາເສບຕິດຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
6. ຫ້າມເຂົ້າຮ່ວມ ແລະ ພົວພັນກັບການຜະລິດ, ຄ້າຂາຍ, ຂົນສົ່ງ ຢາເສບຕິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ຂໍ້ຫ້າມອື່ນ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 58. ຂໍ້ຫ້າມສໍາລັບເຈົ້າໜ້າທີ່ຂອງການຈັດຕັ້ງ ກ່ຽວກັບຢາເສບຕິດ**

ຂໍ້ຫ້າມສໍາລັບເຈົ້າໜ້າທີ່ຂອງການຈັດຕັ້ງ ກ່ຽວກັບຢາເສບຕິດ ມີດັ່ງນີ້:

1. ຫ້າມເຈົ້າໜ້າທີ່ສູນວິໄຈຢາເສບຕິດ ແຈ້ງຜົນວິໄຈ ໂດຍບໍ່ຖືກກັບຕົວຈິງ ຫຼື ສັບປ່ຽນສິ່ງເສບຕິດ;

2. ຫ້າມເຈົ້າໜ້າທີ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ປ່ອຍປະລະເລີຍ, ທຳຮ້າຍຮ່າງກາຍຜູ້ມາບຳບັດ, ຮຽກຮ້ອງຜົນປະໂຫຍດ ຈາກຄອບຄົວ ຫຼື ຜູ້ຕິດຢາເສບຕິດ;
3. ຫ້າມເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ທຳຮ້າຍຮ່າງກາຍຜູ້ຖືກຫາ ຫຼື ຜູ້ກະທຳຜິດກ່ຽວກັບຢາເສບຕິດ;
4. ຫ້າມເຈົ້າໜ້າທີ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບ ອອກໃບຢັ້ງຢືນສຸຂະພາບທີ່ບໍ່ຖືກຕ້ອງຕາມຕົວຈິງ;
5. ຂໍ້ຫ້າມອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VI
## ການພົວພັນ ແລະ ຮ່ວມມືສາກົນ ກ່ຽວກັບຢາເສບຕິດ

**ມາດຕາ 59. ການພົວພັນ ແລະ ຮ່ວມມືສາກົນກ່ຽວກັບຢາເສບຕິດ**

ລັດ ສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມື ສອງຝ່າຍ, ຫລາຍຝ່າຍ ທັງໃນພາກພື້ນ ແລະ ສາກົນ ກ່ຽວກັບການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ດ້ວຍຫຼາຍຮູບການເຊັ່ນ: ການໂຄສະນາ, ສຶກສາອົບຮົມ ເພື່ອປ້ອງກັນບໍ່ໃຫ້ຄົນໃນສັງຄົມຕົກເປັນທາດຂອງຢາເສບຕິດ, ການພັດທະນາຊົນນະບົດ ເພື່ອແກ້ໄຂຄວາມທຸກຍາກ ພາຍຫລັງປະຊາຊົນ ຢຸດເຊົາປູກພືດທີ່ໃຫ້ສານເສບຕິດ, ການປິ່ນປົວ-ບຳບັດ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນໃຫ້ຜູ້ອອກຢາເສບຕິດ, ການປະຕິບັດມາດຕະການທາງດ້ານກົດໝາຍ, ການແລກປ່ຽນຂໍ້ມູນຂ່າວສານ, ເຕັກໂນໂລຊີ, ບົດຮຽນ, ການສ້າງບຸກຄະລາກອນ ແລະ ອື່ນໆ.

**ມາດຕາ 60. ການຮ່ວມມືດ້ານກົດໝາຍ ແລະ ຍຸຕິທຳ**

ໃນການຮ່ວມມືດ້ານກົດໝາຍ ແລະ ຍຸຕິທຳນັ້ນ ອີງການທີ່ມີສິດອຳນາດຂອງ ສປປ ລາວ ສະໜອງຂໍ້ມູນຂ່າວສານກ່ຽວກັບຢາເສບຕິດ, ປະຕິບັດມາດຕະການສືບສວນ-ສອບສວນ ແລະ ມາດຕະການຄວບຄຸມ, ສະກັດກັ້ນ ແລະ ຕ້ານ, ການສັ່ງຟ້ອງ ແລະ ການຕັດສິນຄະດີ ກ່ຽວກັບຢາເສບຕິດ ຕາມການຮ້ອງຂໍຂອງປະເທດພາຄີ.

ສຳລັບການສົ່ງຜູ້ຮ້າຍຂ້າມແດນນັ້ນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ VII
## ການຄວບຄຸມ ແລະ ກວດກາຢາເສບຕິດ

### ໝວດທີ 1
### ການຄວບຄຸມຢາເສບຕິດ

**ມາດຕາ 61. ອົງການຄວບຄຸມຢາເສບຕິດ**

ອົງການຄວບຄຸມຢາເສບຕິດ ປະກອບດ້ວຍ:

- ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ (ກຄສ);
- ຄະນະກຳມະການແຂວງ, ນະຄອນ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ( ກຄສຂ);
- ຄະນະກຳມະການເມືອງ, ເທດສະບານ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ( ກຄສມ);
- ໜ່ວຍງານຂະແໜງການ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ.

**ມາດຕາ 62. ທີ່ຕັ້ງ ແລະ ພາລະບົດບາດຂອງ ກຄສ**

ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ແມ່ນ ອົງການຈັດຕັ້ງຂອງລັດຖະບານ ຊຶ່ງປະກອບດ້ວຍຫຼາຍພາກສ່ວນເຂົ້າຮ່ວມ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານແຫ່ງ ສປປ ລາວ ໃນການກວດກາ ແລະ ຄວບຄຸມຢາເສບຕິດ ຢ່າງລວມສູນເປັນເອກະພາບໃນທົ່ວປະເທດ ໂດຍມີກອງເລຂາປະຈຳ ເພື່ອຊ່ວຍວຽກ ຊຶ່ງມີຖານະເທົ່າກັບກົມ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກຄສ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 63. ສິດ ແລະ ໜ້າທີ່ຂອງ ກຄສ**

ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າແຜນຍຸດທະສາດ, ຮ່າງກົດໝາຍ, ລະບຽບການ, ແຜນການ, ໂຄງການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;
2. ໂຄສະນາເຜີຍແຜ່ ສຶກສາອົບຮົມແນວທາງນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບຢາເສບຕິດ ແລະ ເກັບກຳຂໍ້ມູນຂ່າວສານ ກ່ຽວກັບການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;
3. ຊີ້ນຳ, ຊຸກຍູ້, ກວດກາການຈັດຕັ້ງປະຕິບັດວຽກງານ ກ່ຽວກັບຢາເສບຕິດ ໃນຂອບເຂດທົ່ວປະເທດ;
4. ຂົນຂວາຍ, ຍາດແຍ່ງການຊ່ວຍເຫລືອ ຈາກພາຍໃນ ແລະ ຕ່າງປະເທດ, ຄຸ້ມຄອງກອງທຶນ ເພື່ອວຽກງານສະກັດກັ້ນ ແລະ ຕ້ານຢາເສບຕິດ;
5. ສ້າງ ແລະ ກວດກາແຜນການ ການນຳໃຊ້ກອງທຶນສະກັດກັ້ນ ແລະ ຕ້ານຢາເສບຕິດ;
6. ກໍ່ສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນ ກ່ຽວກັບການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;
7. ເປັນໃຈກາງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ການສ້າງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແລະ ສູນຝຶກວິຊາຊີບເບື້ອງຕົ້ນ ເພື່ອເຮັດໃຫ້ຜູ້ອອກຢາເສບຕິດ ມີວິຊາອາຊີບ ແລະ ມີວຽກເຮັດງານທຳ;

8. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ການສ້າງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແລະ ສູນຝຶກວິຊາຊີບເບື້ອງຕົ້ນ ໃຫ້ຜູ້ອອກຢາເສບຕິດ.
9. ສະຫຼຸບ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອລາຍງານໃຫ້ລັດຖະບານ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 64. ຄະນະກຳມະການແຂວງ, ນະຄອນ ເພື່ອກວດກາ ແລະ ຄວບຄຸມ ຢາເສບຕິດ**

ຄະນະກຳມະການແຂວງ, ນະຄອນ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ແມ່ນ ອົງການຈັດຕັ້ງ ຂອງແຂວງ, ນະຄອນ ຊຶ່ງປະກອບດ້ວຍຫຼາຍພາກສ່ວນເຂົ້າຮ່ວມ, ມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງແຂວງ, ນະຄອນ ໃນການກວດກາ ແລະ ຄວບຄຸມຢາເສບຕິດໃນຂອບເຂດແຂວງ, ນະຄອນ ໂດຍມີກອງເລຂາຊ່ວຍວຽກປະຈຳ ຊຶ່ງມີຖານະເທົ່າກັບພະແນກການຂອງແຂວງ, ນະຄອນ.

ຄະນະກຳມະການແຂວງ, ນະຄອນ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແຜນການຂອງຂັ້ນເທິງ, ລະບຽບກົດໝາຍ ກ່ຽວກັບຢາເສບຕິດມາເປັນລະບຽບການ, ແຜນການ, ໂຄງການຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ປາກົດຜົນເປັນຈິງ;
2. ໂຄສະນາເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;
3. ຊີ້ນຳ, ຊຸກຍູ້ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຢາເສບຕິດ ຂອງຄະນະກຳມະການ ເມືອງ, ເທດສະບານ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ;
4. ສຳຫຼວດເກັບກຳຂໍ້ມູນ ກ່ຽວກັບການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານຢາເສບຕິດ;
6. ສະຫຼຸບ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຢາເສບຕິດ ໃນຂັ້ນຂອງຕົນໃຫ້ອົງການປົກຄອງ ແຂວງ, ນະຄອນ ແລະ ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 65. ຄະນະກຳມະການເມືອງ, ເທດສະບານ ເພື່ອກວດກາ ແລະຄວບຄຸມ ຢາເສບຕິດ**

ຄະນະກຳມະການເມືອງ, ເທດສະບານ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ແມ່ນອົງການຈັດຕັ້ງຂອງເມືອງ, ເທດສະບານ ຊຶ່ງປະກອບດ້ວຍຫຼາຍພາກສ່ວນເຂົ້າຮ່ວມ, ມີພາລະບົດບາດເປັນເສນາທິການ ໃຫ້ອົງການປົກຄອງເມືອງ, ເທດສະບານ ໃນການກວດກາ ແລະ ຄວບຄຸມຢາເສບຕິດ ໂດຍມີກອງເລຂາຊ່ວຍວຽກປະຈຳ ຊຶ່ງມີຖານະເທົ່າກັບຫ້ອງການວິຊາສະເພາະອື່ນຂອງເມືອງ, ເທດສະບານ.

ຄະນະກຳມະການເມືອງ, ເທດສະບານ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການ ກ່ຽວກັບຢາເສບຕິດ;
2. ໂຄສະນາເຜີຍແຜ່, ສຶກສາອົບຮົມ ແນວທາງນະໂຍບາຍ, ລະບຽບກົດໝາຍກ່ຽວກັບຢາເສບຕິດ;
3. ສຳຫຼວດ, ເກັບກຳຂໍ້ມູນ ກ່ຽວກັບຢາເສບຕິດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຊີ້ນຳ, ຊຸກຍູ້ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຢາເສບຕິດ ຂັ້ນລຸ່ມຂອງຕົນ;
5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຢາເສບຕິດ;
6. ສະຫຼຸບ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານຢາເສບຕິດໃນຂັ້ນຂອງຕົນ ໃຫ້ອົງການປົກຄອງເມືອງ, ເທດສະບານ ແລະ ຄະນະກຳມະການແຂວງ, ນະຄອນ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ຢ່າງເປັນປົກກະຕິ;
7. ປະຕິບັດສິດແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 66. ໜ່ວຍງານຂະແໜງການ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ**

ໜ່ວຍງານຂະແໜງການ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ແມ່ນ ການຈັດຕັ້ງໜຶ່ງຂອງກະຊວງ, ອົງການທີ່ກ່ຽວຂ້ອງ ຊຶ່ງມີສິດ ແລະ ໜ້າທີ່ກວດກາ ແລະ ຄວບຄຸມຢາເສບຕິດ ຕາມພາລະ ບົດບາດ ຂອງຂະແໜງການຕົນ.

## ໝວດທີ 2
## ການກວດກາຢາເສບຕິດ

**ມາດຕາ 67. ອົງການກວດກາຢາເສບຕິດ**

ອົງການກວດກາຢາເສບຕິດ ແມ່ນ ອົງການດຽວກັນກັບອົງການຄວບຄຸມຢາເສບຕິດ ທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້.

**ມາດຕາ 68. ສິດ ແລະ ໜ້າທີ່ ຂອງ ອົງການກວດກາຢາເສບຕິດ**

ອົງການກວດກາຢາເສບຕິດ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດວຽກງານການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໂດຍລົງເລິກບາງບັນຫາດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດແຜນການ, ໂຄງການ, ລະບຽບກົດໝາຍ ກ່ຽວກັບຢາເສບຕິດ ລວມທັງ ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແລະ ສູນຝຶກວິຊາຊີບເບື້ອງຕົ້ນ ໃຫ້ຜູ້ອອກຢາເສບຕິດ;
2. ຕິດຕາມ, ຊີ້ນຳ, ກວດກາ ການແກ້ໄຂບັນຫາຢາເສບຕິດ ຕາມລະບຽບກົດໝາຍ;
3. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການກວດກາ, ຄວບຄຸມ, ສະກັດກັ້ນ, ຕ້ານ ແລະ ການແກ້ໄຂບັນຫາຢາເສບຕິດ;
4. ສະເໜີວິທີ, ມາດຕະການແກ້ໄຂຜົນຂອງການຕິດຕາມກວດກາ ໃຫ້ຂັ້ນເທິງຕົກລົງ;

5. ສະຫຼຸບ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຂັ້ນເທິງ ກ່ຽວກັບວຽກງານກວດກາຢາເສບຕິດ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 69. ຮູບການ ການກວດກາຢາເສບຕິດ**

ການກວດກາຢາເສບຕິດ ມີສາມຮູບການ ດັ່ງນີ້:

- ການກວດກາຕາມລະບົບປົກກະຕິ;
- ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງເທື່ອຕໍ່ປີ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາ ເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຮູ້ລ່ວງໜ້າກ່ອນຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາ ທີ່ມີການດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າກ່ອນ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ໝວດທີ 1
### ນະໂຍບາຍຕໍ່ຜູ້ມີຜົນງານ

**ມາດຕາ 70. ນະໂຍບາຍຕໍ່ພະນັກງານ, ເຈົ້າໜ້າທີ່**

ພະນັກງານ, ເຈົ້າໜ້າທີ່ ແລະ ການຈັດຕັ້ງ ທີ່ມີຜົນງານ ໃນການປະຕິບັດກົດໝາຍວ່າດ້ວຍ ຢາເສບຕິດ ເປັນຕົ້ນ ກ່ຽວກັບການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຈະໄດ້ຮັບ ການຍ້ອງຍໍ, ບຳເນັດ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 71. ນະໂຍບາຍຕໍ່ຜູ້ໃຫ້ຄວາມຮ່ວມມື**

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະກອບສ່ວນເຂົ້າໃນການ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ດ້ວຍການເຂົ້າຮ່ວມງານ, ໃຫ້ຂໍ້ມູນ-ຂ່າວສານ ແລະ ອື່ນໆ ຈະໄດ້ຮັບ ການຍ້ອງຍໍ, ບຳເນັດ, ການປິ່ນປົວ ແລະ ນະໂຍບາຍອື່ນ ຢ່າງເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ໝວດທີ 2
# ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 72. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ມາດຕະການທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 146 ຂອງກົດໝາຍອາຍາ ແລະ ກົດໝາຍສະບັບນີ້.

**ມາດຕາ 73. ມາດຕະການສຶກສາອົບຮົມ**

ບຸກຄົນທີ່ໄດ້ເສບຢາເສບຕິດ ຫຼື ມີໄວ້ໃນຄອບຄອງເຄມີຢາງຄັນຊາ ແລະ ອະນຸພັນຕ່າງໆຂອງເຄມີຢາງຄັນຊາແຕ່ 0,3 ກຣາມ ລົງມາ ຖືວ່າເປັນຜູ້ຖືກເຄາະຮ້າຍ, ເປັນຜູ້ສ່ຽງຕໍ່ການຕິດຢາ, ເປັນຜູ້ຕິດຢາ ຈະຖືກສຶກສາອົບຮົມ ແລະ ຈະຖືກນຳໄປປິ່ນປົວຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ບໍ່ໃຫ້ຄວາມຮ່ວມມືໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ກໍຈະຖືກສຶກສາອົບຮົມ.

ບຸກຄົນທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໜ້ອຍ, ຈິງໃຈລາຍງານ, ຮັບສາລະພາບຄວາມຜິດຂອງຕົນຕໍ່ການຈັດຕັ້ງ ແລະ ສົ່ງຊັບທີ່ໄດ້ເອົາໄປໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ແກ່ການຈັດຕັ້ງຢ່າງຄົບຖ້ວນແລ້ວ ກໍຈະໄດ້ຮັບການສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 74. ການປະຕິບັດວິໄນ**

ພະນັກງານ, ລັດຖະກອນ ຫລື ເຈົ້າໜ້າທີ່ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບຢາເສບຕິດ ແລະ ຂໍ້ຫ້າມ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫລົບຫລີກຈາກຄວາມຜິດຂອງຕົນ ກໍຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ແລະ ບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫລື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງນັ້ນຢ່າງຄົບຖ້ວນ.

**ມາດຕາ 75. ມາດຕະການທາງອາຍາ**

ເຄມີຢາງຄັນຊາ (Tetrahydrocannabinol, Hashish ) ແລະ ອະນຸພັນຕ່າງໆ ຂອງເຄມີຢາງຄັນຊາ:

- ນຳ້ໜັກສຸດທິ ເກີນກວ່າ 0,3 ກຣາມ ຫາ 50 ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 9.000.000 ກີບ;
- ນຳ້ໜັກສຸດທິ ເກີນກວ່າ 50 ກຣາມ ຫາ 100 ກຣາມ ຈະຖືກ ລົງໂທດຕັດອິດສະລະພາບ ແຕ່ຫ້າ ປີ ຫາເຈັດປີ ແລະຈະຖືກປັບໃໝແຕ່ 10.000.000 ກີບ ຫາ 29.000.000 ກີບ ແລະຈະຖືກຣິບຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ;
- ນຳ້ໜັກສຸດທິ ເກີນກວ່າ 100 ກຣາມ ຫາ 200 ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາສິບສີ່ປີ ແລະຈະຖືກປັບໃໝແຕ່ 30.000.000 ກີບ ຫາ 59.000.000 ກີບ ແລະ ຈະຖືກຣິບຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ;
- ນຳ້ໜັກສຸດທິ ເກີນກວ່າ 200 ກຣາມ ຫາ 500 ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາຊາວປີ ແລະຈະຖືກປັບໃໝ ແຕ່ 60.000.000 ກີບ ຫາ 99.000.000 ກີບ ແລະ ຈະຖືກຣິບຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ;
- ນຳ້ໜັກສຸດທິ ເກີນກວ່າ 500 ກຣາມ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 200.000.000 ກີບ ແລະ ຈະຖືກຣິບຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ.

**ມາດຕາ 76. ມາດຕະການຕໍ່ຜູ້ທີ່ອອກຢາເສບຕິດແລ້ວກັບຄືນມາຕິດໃໝ່**

ຜູ້ທີ່ອອກຢາເສບຕິດແລ້ວ ກັບຄືນມາຕິດໃໝ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງ ປີ ແລະ ຈະຖືກປັບໃໝ ແຕ່ 100.000 ກີບ ຫາ 300.000 ກີບ.

**ມາດຕາ 77. ມາດຕະການໂທດເພີ່ມ**

ໃນການດຳເນີນຄະດີອາຍາຕໍ່ຜູ້ກະທຳຜິດ ກ່ຽວກັບຢາເສບຕິດ, ນອກຈາກໂທດຕົ້ນຕໍ ທີ່ໄດ້ກຳນົດໄວ້ໃນ ມາດຕາ 73 ຫາ 76 ຂອງກົດໝາຍສະບັບນີ້ແລ້ວ ທຸກຊັບສິນ ທີ່ພົວພັນກັບການກະທຳຜິດ ກ່ຽວກັບຢາເສບຕິດ ຊຶ່ງແມ່ນຊັບສິນທີ່ຮັບໃຊ້ ແລະ ໄດ້ມາຈາກການກະທຳຜິດ ເຊັ່ນ: ເງິນ, ຄຳ, ຊັບສິນມີຄ່າ, ທີ່ດິນ, ເຮືອນ, ພາຫະນະ, ອຸປະກອນ ຈະຖືກຣິບເປັນຂອງລັດ.

ສຳລັບຢາເສບຕິດ ນັ້ນ ໃຫ້ທຳລາຍຖິ້ມ ຕາມລະບຽບກົດໝາຍ.

**ມາດຕາ 78. ມາດຕະການທາງແພ່ງ**

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດ ຍັງຈະໄດ້ໃຊ້ແທນຄ່າເສຍຫາຍຕ່າງໆ ເຊັ່ນ: ຄ່າປິ່ນປົວ, ຄ່າປົວແປງຈິດໃຈ, ຄ່າປ່ວຍການ, ຄ່າເດີນທາງ, ຄ່າກິນຢູ່ພັກເຊົາ ແລະ ຄ່າເສຍຫາຍອື່ນ ຕາມລະບຽບກົດໝາຍ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 79. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 80. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງເກົ້າສິບວັນ ນັບແຕ່ວັນ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ